Schweizerische Eidgenossenschaft
Confédération suisse
Confederazione Svizzera
Confederaziun svizra

Swiss Agency for Development and Cooperation SDC

# MEETING MINUTES

## THEMATIC WORKSHOP ON GOVERNMENT STRUCTURAL IMPROVEMENT

| | |
|---|---|
| **Meeting** | Sub-Sector Working Group – Public Services Improvement and Citizen Engagement (PSI&CE) |
| **Location** | New Building, Ministry of Home Affairs |
| **Date** | 10/10/2024 |
| **Time** | 09:00 – 11:30 |
| **Chairs** | Mr. Vanna Boupha, Head of Cabinet Office, Ministry of Home Affairs;<br>UNDP and SDC were represented at technical level and moderated the Q&A session |
| **Minute taker** | Armita Azadeh – Governance Specialist - UNDP |

1. **Objective of the meeting**

The meeting aimed to present the new structure and functions of the Central Committee for Organization and Personnel (CCOP) following the 2025 government restructuring, as part of the broader national **Organizational Structural Reform**. The session also provided a platform for dialogue between the government and development partners on the implications of the reform for governance, coordination, and service delivery.

2. **Presentation by CCOP (DPAD)**

***Presenter:*** *Mr. Phonepaseuth Koulavong, Deputy Director, Department of Public Administration Development (DPAD)*

Mr. Koulavong presented an overview of the **organizational structural reform**, focusing on how ministries and administrative bodies are being merged, streamlined, and modernized to improve efficiency, coordination, and public service delivery.

The reform is guided by two key legal instruments—Resolution No. 03 (12 March 2025) approving the restructuring, and Resolution No. 05/NA (20 March 2025) providing endorsement by the National Assembly. The reform reflects the Party's direction to strengthen state governance through decentralization, clearer job roles, and the integration of Party and government structures. Its main objective is to restructure and streamline the national and local organizational systems for more effective governance, in alignment with Party resolutions and national reform policies.
The restructuring process involves several key steps: establishing reform committees and secretariats to oversee implementation; collecting baseline data on staffing and organizational structures; promoting ideological understanding among Party members and government staff; revising legal instruments to ensure coherence with the new structure; and monitoring progress with regular reporting to the central-level committee.

**Major Structural Changes:**

- **MoHA merged with CCOP.**
- **MoPI merged with MoF** (Planning and Investment with Finance).
- **MoNRE merged with MoAF** (Natural Resources & Environment with Agriculture & Forestry).

- **MoEM merged with MoIC** (Energy & Mines with Industry & Commerce).
- **Media sector** transferred to the **Propaganda and Training Board**.

**Institutional Roles within CCOP:**

- **CCOP:** Main coordinating body for Party and government personnel, civil service, and administration.
- **DPAD:** Leads public administration reforms, modernization, decentralization, and One-Door Service Centers (ODSCs).
- **DOLA:** Oversees local governance and decentralization (Sam Sang policy).

**Future Directions (2025–2030):**

1. Complete restructuring of ministries into **15 streamlined units**.
2. Finalize job position determination and legal framework (Decree 734/Gov, Decision 77/PM).
3. Strengthen macroeconomic management with decentralization to provinces and districts.
4. Conduct reviews and seminars to monitor progress.
5. Continue implementing Party Resolutions 076/2019, 05/2023, and 17/2023.

## 3. Discussion and Q&A

**General Observations**

- The government confirmed its openness to **technical support from international partners** in the areas of public administration, policy reform, and capacity development.
- Partners raised questions on the GSWG Terms of Reference (ToRs) and coordination modalities following the restructuring. It was noted that the **SWG Secretariat** will need redefinition following the restructuring, particularly as the Ministry of Finance (MoF) is expected to provide inputs to improve the RTP process.
- If necessary, the government expressed willingness to assign another agency to facilitate continued collaboration between international partners and the Governance Sector Working Group (GSWG).

**Institutional Mandates following restructuring**

Partners sought clarification on the institutional mandates of the newly merged entities and the continuity of decentralization policies.

- SDC inquired whether the Department of Public Administration Development (DPAD) had received new functions. The government clarified that DPAD’s mandate remains unchanged, focusing on public service development and job description reform.

- On decentralization, SDC asked whether the *Sam Sang* (Three Builds) policy would continue. CCOP confirmed that it remains a core pillar of local governance and will be retained under CCOP’s oversight as part of the broader restructuring.

Schweizerische Eidgenossenschaft
Confédération suisse
Confederazione Svizzera
Confederaziun svizra

Swiss Agency for Development and Cooperation SDC

UNDP

- On the role of CSOs, the government explained that responsibilities previously under MOHA have been transferred to CCOP. Ongoing discussions are defining CSO engagement and clarifying mandates at the *Taseng* (sub-district) level.
- Development partners sought clarity on the government's upcoming priorities to guide their support.
    - SDC requested identification of at least three strategic priorities for the next period. CCOP responded that DPAD, DOLA, and Department on Civil Servants Management are jointly preparing a five-year strategic plan (2025–2030), which will outline reform priorities and coordination frameworks.

**Human Resources and Organizational Restructuring**

A major topic of discussion focused on the human resource implications of the reform and progress in defining new job structures.

- UNDP asked about the timeline for completing job descriptions, with the government confirming the process should conclude by the end of 2025 once all restructuring is finalized.
- Partners highlighted challenges in aligning human resources to new merged positions and ensuring clarity of roles. CCOP acknowledged these issues, noting ongoing training and technical assistance for provinces to build capacity and adapt to new structures.
- Regarding subnational restructuring, the government explained that provinces are responsible for completing their reorganization; however, progress remains uneven, which may delay finalization of job descriptions.

**Communication and Public Awareness**

The transition in public service responsibilities raised concerns about information dissemination to citizens.

- UNDP emphasized the importance of communication on how service delivery responsibilities are shifting under the Ministry of Public Security (MOPS).
- CCOP and MOPS clarified that dissemination is ongoing, with regional information campaigns organized across northern, central, and southern provinces. Provincial Departments of Public Security are leading local-level outreach, although Luang Namtha remains the only province still finalizing its transfer of functions.

### 4. UNDP Presentation on 10th NSEDP M&E Framework

UNDP presented the results of the Workshop on Monitoring & Evaluation Framework for Outcome 6, held in Vang Vieng on 6 October 2025. The indicators aim to enhance evidence-based monitoring of governance, justice, and service delivery. <u>The results are pending endorsement from relevant ministries and validation of data sources.</u>

**Key Proposed Indicators (examples):**

- Proportion of population satisfied with their last experience of public services.

- Proportion of enacted laws or plans with evidence of public participation.
- Reduction in the ratio of civil servants per 10,000 working-age citizens.
- Number of One-Stop Service Centers established and operational.
- Proportion of public services accessible through digital platforms.
- Number of oversight reports submitted by NA/PPA with actionable recommendations.
- Percentage of issues raised by citizens through hotline and petitions followed up by PPAs.
- Case clearance rate and prosecutorial timeliness indicators (for justice sector).

UNDP emphasized the importance of **data availability and institutional capacity** to monitor these indicators during the 10th NSEDP implementation period (2026–2030).

ບົດບັນທຶກກອງປະຊຸມ

**ກອງປະຊຸມວິຊາການ: ການປັບປຸງໂຄງສ້າງການຈັດຕັ້ງຂອງລັດຖະບານ ໜ່ວຍງານຍ່ອຍດ້ານການປັບປຸງການບໍລິການພາກລັດ ແລະ ການມີສ່ວນຮ່ວມຂອງພົນລະເມືອງ (PSI&CE)**

| | |
|---|---|
| **Meeting** | ໜ່ວຍງານຍ່ອຍ – ການປັບປຸງການບໍລິການທາງລັດຖະການ ແລະ ການມີສ່ວນຮ່ວມຂອງປະຊາຊົນ (PSI&CE) |
| **Location** | ຫ້ອງປະຊຸມຊັ້ນ 5 ຄະນະຈັດຕັ້ງສູນກາງພັກ ຄຸ້ມນາໄຮ່ດຽວ |
| **Date** | 10/10/2024 |
| **Time** | 09:00 – 11:30 |
| **Chairs** | **ທ່ານ ວັນນະ ບຸບຜາ**, ຫົວໜ້າຫ້ອງວ່າການ, ຄະນະຈັດຕັ້ງສູນກາງພັກ; UNDP ແລະ SDC ເຂົ້າຮ່ວມໃນລະດັບວິຊາການ ແລະ ເປັນຜູ້ດຳເນີນການຖາມ-ຕອບ |
| **Minute taker** | Armita Azadeh – Governance Specialist - UNDP |

# ຈຸດປະສົງຂອງກອງປະຊຸມ

---

ຈຸດປະສົງຂອງກອງປະຊຸມແມ່ນເພື່ອ **ນຳສະເໜີກ່ຽວກັບໂຄງຮ່າງການຈັດຕັ້ງ ແລະ ພາລະບົດບາດໃໝ່ຂອງ ຄະນະຈັດຕັ້ງສູນກາງພັກ (CCOP)** ພາຍຫຼັງການປັບປຸງກົງຈັກຂອງລັດຖະບານໃນປີ 2025, ເຊິ່ງເປັນສ່ວນໜຶ່ງຂອງ ການປະຕິຮູບກົງຈັກການຈັດຕັ້ງລະດັບຊາດ.

ກອງປະຊຸມຍັງເປັນເວທີປຶກສາຫາລືລະຫວ່າງພາກລັດ ແລະ ຄູ່ຮ່ວມພັດທະນາ ກ່ຽວກັບຜົນ ຂອງການປັບປຸງຕໍ່ວຽກງານການປົກຄອງ, ການປະສານງານ, ແລະ ການບໍລິການ.

# I. ການນຳສະເໜີຂອງ CCOP (DPAD)

---

**ຜູ້ລາຍງານ:** ທ່ານ ພອນພະເສີດ ກູລາວົງ, ຮອງຫົວໜ້າກົມພັດທະນາການບໍລິຫານພາກລັດ (DPAD)

ທ່ານ ພອນປະເສີດ ກູລາວົງ ໄດ້ລາຍງານພາບລວມຂອງ **ການປັບປຸງກົງຈັກການຈັດຕັ້ງ**, ໂດຍເນັ້ນໃສ່ການໂຮມການຈັດຕັ້ງຂອງບາງກະຊວງ, ການປັບປຸງ, ແລະ ການຍົກລະດັບກະຊວງ ແລະ ອົງການບໍລິຫານ ເພື່ອເພີ່ມປະສິດທິພາບ , ການປະສານງານ, ແລະ ການບໍລິການສາທາລະນະ.

- ການປັບປຸງກົງຈັກການຈັດຕັ້ງແມ່ນອີງໃສ່ນິຕິກຳສອງສະບັບຄື: **ມະຕິຕົກລົງ ເລກທີ 03/ກມສພ** (12 ມີນາ 2025) ຂອງກົມການເມືອງສູນກາງພັກ, ແລະ **ມະຕິຕົກລົງ ເລກທີ 05/ສພຊ** (20 ມີນາ 2025) ທີ່ໄດ້ຮັບການຮັບຮອງຈາກສະພາແຫ່ງຊາດ.
- ການປັບປຸງກົງຈັກການຈັດຕັ້ງແມ່ນສະທ້ອນໃຫ້ເຫັນເຖິງທິດທາງຂອງພັກໃນການເສີມຂະຫຍາຍການຄຸ້ມຄອງລັດ ຜ່ານການແບ່ງຂັ້ນຄຸ້ມຄອງ, ການກຳນົດພາລະບົດບາດທີ່ຊັດເຈນ, ແລະ ການເຊື່ອມໂຍງລະຫວ່າງອົງການພັກ ແລະ ລັດ.
- ຈຸດປະສົງຫຼັກແມ່ນການປັບປຸງໂຄງສ້າງ ແລະ ປັບປຸງກົງຈັກການຈັດຕັ້ງໃນສູນກາງ ແລະ ທ້ອງຖິ່ນ ເພື່ອໃຫ້ການປົກຄອງມີປະສິດທິພາບສູງຂຶ້ນ, ສອດຄ່ອງກັບມະຕິຂອງພັກ ແລະ ນະໂຍບາຍການປະຕິຮູບແຫ່ງຊາດ.
- ຂັ້ນຕອນສຳຄັນຂອງການປັບປຸງປະກອບມີ: ການສ້າງຕັ້ງຄະນະກຳມະການປະຕິຮູບ ແລະ ຫ້ອງການເລຂາທິການ ເພື່ອຊີ້ນຳການຈັດຕັ້ງປະຕິບັດ; ການເກັບກຳຂໍ້ມູນພື້ນຖານກ່ຽວກັບພະນັກງານ ແລະ ໂຄງສ້າງການຈັດຕັ້ງ; ການເສີມຂະຫຍາຍຄວາມເຂົ້າໃຈດ້ານແນວຄິດ ຂອງສະມາຊິກພັກ ແລະ ພະນັກງານ-ລັດຖະກອນ; ການປັບປຸງແມ່ນໄດ້ອີງໃສ່ນິຕິກຳ ເພື່ອຮັບປະກັນຄວາມສອດຄ່ອງກັບໂຄງສ້າງໃໝ່; ແລະ ການຕິດຕາມຄວາມຄືບໜ້າພ້ອມທັງລາຍງານເປັນປົກກະຕິຕໍ່ຄະນະກຳມະການຂັ້ນສູນກາງ.

## ການປັບປຸງກົງຈັການຈັດຕັ້ງມີລາຍລະອຽດຄື:

- **ກະຊວງພາຍໃນ (MoHA)** ຖືກໂຮມເຂົ້າກັບ **CCOP**.
- **ກະຊວງແຜນການ ແລະ ການລົງທຶນ (MoPI)** ຖືກໂຮມເຂົ້າກັບ **ກະຊວງການເງິນ (MoF)**.
- **ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ (MoNRE)** ຖືກໂຮມເຂົ້າກັບ **ກະຊວງກະສິກຳ ແລະ ປ່າໄມ້ (MoAF)**.
- **ກະຊວງພະລັງງານ ແລະ ບໍ່ແຮ່ (MoEM)** ຖືກໂຮມເຂົ້າກັບ **ກະຊວງອຸດສາຫະກຳ ແລະ ການຄ້າ (MoIC)**.
- **ຂະແໜງສື່ມວນຊົນ** ຖືກໂອນຍ້າຍໄປຂຶ້ນກັບ **ຄະນະໂຄສະນາອົບຮົມສູນກາງພັກ**.
- ສຳເລັດການປັບປຸງກົງຈັກການຈັດຕັ້ງຂອງບັນດາກະຊວງເປັນ **15 ຫົວໜ່ວຍທີ່ກະທັດຮັດ**.

## ພາລະບົດບາດຂອງຄະນະຈັດຕັ້ງສູນກາງພັກ CCOP:

- **CCOP:** ອົງການທີ່ເປັນເສນາທິການໃຫ້ແກ່ສູນກາງພັກພັກ ແລະ ລັດຖະບານ, ເປັນຕົ້ນແມ່ນວຽກງານພະນັກງານ-ລັດຖະກອນ, ວຽກງານບໍລິຫານ, ແລະ ວຽກການການປົກຄອງທ້ອງຖິ່ນ.
- **DPAD (ກົມພັດທະນາການບໍລິຫານພາກລັດ):** ນຳພາວຽກງານການປັບປຸງການບໍລິການທາງພາກລັດ, ການຫັນເປັນທັນສະໄໝ, ການແບ່ງຂັ້ນຄຸ້ມຄອງ, ແລະ ສູນບໍລິການປະຕູດຽວ (ODSCs).
- **DOLA (ກົມປົກຄອງທ້ອງຖິ່ນ):** ຊີ້ນຳວຽກງານປົກຄອງທ້ອງຖິ່ນ ແລະ ການແບ່ງຂັ້ນຄຸ້ມຄອງ (ນະໂຍບາຍສາມສ້າງ).

### ທິດທາງໃນອະນາຄົດ (2025–2030):

- ສຳເລັດການກຳນົດຕຳແໜ່ງງານ ຕາມນິຕິກຳ (ດຳລັດ 734/ລັດຖະບານ, ຄຳສັ່ງ 77/ນາຍົກ).
- ເສີມສ້າງການຄຸ້ມຄອງເສດຖະກິດມະຫາພາກ ດ້ວຍການແບ່ງຂັ້ນຄຸ້ມຄອງລົງສູ່ແຂວງ ແລະ ເມືອງ.
- ດຳເນີນການທົບທວນ ແລະ ກອງປະຊຸມສຳມະນາ ເພື່ອຕິດຕາມຄວາມຄືບໜ້າ.
- ສືບຕໍ່ຈັດຕັ້ງປະຕິບັດມະຕິຂອງພັກ ເລກທີ 076/2019, 05/2023, ແລະ 17/2023.

## II. ປຶກສາຫາລື ແລະ ຖາມ-ຕອບ

---

### ຂໍ້ສັງເກດທົ່ວໄປ

- ພາກລັດ ໂດຍສະເພາະ ແມ່ນຄະນະຈັດຕັ້ງສູນກາງພັກ ໄດ້ຢືນຢັນເຖິງຄວາມເປີດກວ້າງໃນການຮັບເອົາ **ການສະໜັບສະໜູນດ້ານວິຊາການຈາກຄູ່ຮ່ວມສາກົນ** ໃນຂົງເຂດການບໍລິຫານພາກລັດ, ການປະຕິຮູບນະໂຍບາຍ, ແລະ ການພັດທະນາຄວາມສາມາດ.
- ຄູ່ຮ່ວມໄດ້ຍົກຄຳຖາມກ່ຽວກັບກົດລະບຽບການດຳເນີນງານ (ToRs) ຂອງ GSWG ແລະ ຮູບແບບການປະສານງານພາຍຫຼັງການປັບໂຄງສ້າງ.
- ໄດ້ມີການຕັ້ງຂໍ້ສັງເກດວ່າ **ຫ້ອງການກອງເລຂາ ຂອງ SWG** ຈະຕ້ອງມີການກຳນົດຄືນໃໝ່ພາຍຫຼັງການປັບໂຄງສ້າງ, ໂດຍສະເພາະກະຊວງການເງິນ (MoF) ຄາດວ່າຈະປະກອບສ່ວນປັບປຸງຂະບວນການ RTP.
- ຄະນະຈັດຕັ້ງສູນກາງພັກເຫັນດີທີ່ຈະມອບໝາຍໃຫ້ອົງການອື່ນອຳນວຍຄວາມສະດວກໃນການຮ່ວມມືຢ່າງຕໍ່ເນື່ອງລະຫວ່າງຄູ່ຮ່ວມສາກົນ ແລະ ກໍ່ຄືຮັບຜິດຊອບເປັນກອງເລຂາໜ່ວຍງານດ້ານການປົກຄອງ (GSWG) ຖ້າຈຳເປັນ.

## ພາລະບົດບາດຂອງສະຖາບັນພາຍຫຼັງການປັບໂຄງສ້າງ

- ຄູ່ຮ່ວມໄດ້ຂໍຄວາມກະຈ່າງແຈ້ງກ່ຽວກັບພາລະບົດບາດຂອງອົງການທີ່ຖືກລວມເຂົ້າກັນໃໝ່ ແລະ ຄວາມຕໍ່ເນື່ອງຂອງນະໂຍບາຍແບ່ງຂັ້ນຄຸ້ມຄອງ.
- SDC ໄດ້ສອບຖາມວ່າ ກົມພັດທະນາການບໍລິຫານພາກລັດ (DPAD) ໄດ້ຮັບໜ້າທີ່ໃໝ່ຫຼືບໍ່.
- ພາກລັດໄດ້ຊີ້ແຈງວ່າ **ພາລະບົດບາດຂອງ DPAD ຍັງຮັກສາໄວ້ຄືເກົ່າ**, ໂດຍສຸມໃສ່ການພັດທະນາການບໍລິການຂອງລັດ ແລະ ການປະຕິຮູບຄໍາອະທິບາຍໜ້າທີ່ວຽກງານ.
- ກ່ຽວກັບການແບ່ງຂັ້ນຄຸ້ມຄອງ, SDC ໄດ້ຖາມວ່າ ນະໂຍບາຍ **ສາມສ້າງ** ຈະສືບຕໍ່ຫຼືບໍ່.
- CCOP ໄດ້ຢືນຢັນວ່າ ສາມສ້າງຍັງແມ່ນວຽກງານຫຼັກຂອງການປົກຄອງທ້ອງຖິ່ນ ແລະ ຈະຖືກຮັກສາໄວ້ພາຍໃຕ້ການຊີ້ນໍາຂອງ CCOP ເຊິ່ງເປັນສ່ວນໜຶ່ງຂອງການປັບໂຄງສ້າງທີ່ກວ້າງຂວາງ.
- ກ່ຽວກັບບົດບາດຂອງອົງການຈັດຕັ້ງທາງສັງຄົມ (CSOs), ພາກລັດໄດ້ອະທິບາຍວ່າ ຄວາມຮັບຜິດຊອບທີ່ເຄີຍຢູ່ພາຍໃຕ້ MOHA ໄດ້ຖືກໂອນໄປໃຫ້ CCOP ແລ້ວ.
- ວຽກງານຂອງ CSOs ແລະ **ຕາແສງ ຍັງຢູ່ໃນຊ່ວງການສືບຕໍ່ຄົ້ນຄວ້າ**.
- ຄູ່ຮ່ວມພັດທະນາໄດ້ຂໍຄວາມກະຈ່າງແຈ້ງກ່ຽວກັບບູລິມະສິດທີ່ຈະມາເຖິງຂອງລັດຖະບານເພື່ອຊີ້ນໍາການສະໜັບສະໜູນຂອງພວກເຂົາ.
- SDC ໄດ້ຮຽກຮ້ອງໃຫ້ກໍານົດຢ່າງໜ້ອຍສາມບູລິມະສິດຍຸດທະສາດສໍາລັບໄລຍະຕໍ່ໄປ.
- CCOP ໄດ້ຕອບວ່າ DPAD, DOLA, ແລະ ກົມຄຸ້ມຄອງລັດຖະກອນ ແລະ ພາລະກອນ ກໍາລັງຮ່ວມກັນກະກຽມ **ແຜນຍຸດທະສາດຫ້າປີ (2025–2030)**, ເຊິ່ງຈະກໍານົດບູລິມະສິດການປະຕິຮູບ ແລະ ຂອບການປະສານງານ.

## ບຸກຄະລາກອນ ແລະ ການປັບປຸງກົງຈັກການຈັດຕັ້ງ

- ຫົວຂໍ້ຫຼັກຂອງການສົນທະນາແມ່ນເນັ້ນໃສ່ຜົນກະທົບດ້ານບຸກຄະລາກອນຕໍ່ການປະຕິຮູບ ແລະ ການກໍານົດຕໍາແໜ່ງງານ.
- UNDP ໄດ້ຖາມກ່ຽວກັບກໍານົດເວລາສໍາລັບການສໍາເລັດຄໍາອະທິບາຍໜ້າທີ່ວຽກງານ, ເຊິ່ງພາກລັດໄດ້ຢືນຢັນວ່າຂະບວນການຄວນຈະສິ້ນສຸດລົງ **ພາຍໃນທ້າຍປີ 2025** ເມື່ອການປັບໂຄງສ້າງທັງໝົດສໍາເລັດ.
- ຄູ່ຮ່ວມໄດ້ຍົກໃຫ້ເຫັນສິ່ງທ້າທາຍໃນການຈັດວາງບຸກຄະລາກອນໃຫ້ເຂົ້າກັບຕໍາແໜ່ງທີ່ຖືກລວມເຂົ້າກັນໃໝ່ ແລະ ການຮັບປະກັນຄວາມຊັດເຈນຂອງພາລະບົດບາດ.
- CCOP ໄດ້ຮັບຮູ້ບັນຫາເຫຼົ່ານີ້, ໂດຍໄດ້ກ່າວເຖິງການຝຶກອົບຮົມ ແລະ ການຊ່ວຍເຫຼືອດ້ານວິຊາການທີ່ດໍາເນີນຢູ່ສໍາລັບແຂວງຕ່າງໆ ເພື່ອສ້າງຄວາມສາມາດ ແລະ ປັບຕົວເຂົ້າກັບໂຄງສ້າງໃໝ່.

- ກ່ຽວກັບການປັບໂຄງສ້າງຂັ້ນທ້ອງຖິ່ນ, ພາກລັດໄດ້ອະທິບາຍວ່າແຂວງມີຄວາມຮັບຜິດຊອບໃນການປັບປຸງກົງຈັກການຈັດຕັ້ງຂອງຕົນ; ແຕ່ຢ່າງໃດກໍຕາມ, ຄວາມຄືບໜ້າຍັງບໍ່ສາມາດກຳນົດໄດ້, ເຊິ່ງອາດຈະເຮັດໃຫ້ວຽກງານລ່າຊ້າ.

### ການສື່ສານ ແລະ ການສ້າງຄວາມຮັບຮູ້ສາທາລະນະ

- ການໂອນຄວາມຮັບຜິດຊອບໃນການບໍລິການພາກລັດໄດ້ສ້າງຄວາມເປັນຫ່ວງກ່ຽວກັບການເຜີຍແຜ່ຂໍ້ມູນໃຫ້ແກ່ປະຊາຊົນ.
- UNDP ໄດ້ເນັ້ນໜັກເຖິງຄວາມສຳຄັນຂອງການສື່ສານກ່ຽວກັບວິທີການໂອນວຽກງານການຈົດທະບຽນພົນລະເມືອງໄປຂຶ້ນກັບກະຊວງປ້ອງກັນຄວາມສະຫງົບ (MOPS).
- CCOP ແລະ MOPS ໄດ້ຊີ້ແຈງວ່າການເຜີຍແຜ່ກຳລັງດຳເນີນຢູ່, ໂດຍມີການຈັດຕັ້ງການໂຄສະນາເຜີຍແຜ່ຂໍ້ມູນໃນພາກເໜືອ, ພາກກາງ, ແລະ ພາກໃຕ້.
- ກອງບັນຊາການປ້ອງກັນຄວາມສະຫງົບແຂວງກຳລັງເປັນເຈົ້າການໃນການເຜີຍແຜ່ໃນຂັ້ນທ້ອງຖິ່ນ, ຍັງມີແຕ່ແຂວງຫຼວງນໍ້າທາເປັນແຂວງດຽວທີ່ຍັງຢູ່ໃນຂັ້ນຕອນສຸດທ້າຍຂອງການໂອນຍ້າຍໜ້າທີ່.

# III. ການນຳສະເໜີຂອງ UNDP ກ່ຽວກັບກອບວຽກ M&E ຂອງ NSEDP ຄັ້ງທີ 10

---

UNDP ໄດ້ນຳສະເໜີຜົນຂອງກອງປະຊຸມວິຊາການກ່ຽວກັບກອບວຽກຕິດຕາມ ແລະ ປະເມີນຜົນ (M&E) ສຳລັບຜົນໄດ້ຮັບ 6, ເຊິ່ງໄດ້ຈັດຂຶ້ນທີ່ວັງວຽງໃນວັນທີ 6 ຕຸລາ 2025. ຕົວຊີ້ວັດດັ່ງກ່າວມີຈຸດປະສົງເພື່ອເສີມຂະຫຍາຍການຕິດຕາມທີ່ອີງໃສ່ຫຼັກຖານຂອງວຽກງານການປົກຄອງ, ຄວາມຍຸຕິທຳ, ແລະ ການບໍລິການ.

ຜົນການນຳສະເໜີຍັງລໍຖ້າການຮັບຮອງຈາກກະຊວງທີ່ກ່ຽວຂ້ອງ ແລະ ການກວດສອບແຫຼ່ງຂໍ້ມູນ.

### ຕົວຊີ້ວັດທີ່ຖືກສະເໜີຂຶ້ນສຳຄັນ (ຕົວຢ່າງ):

- ອັດຕາສ່ວນຂອງພົນລະເມືອງທີ່ພໍໃຈກັບປະສົບການການບໍລິການສາທາລະນະຄັ້ງຫຼ້າສຸດຂອງພວກເຂົາ.
- ອັດຕາສ່ວນຂອງກົດໝາຍ ຫຼື ແຜນການທີ່ຖືກປະກາດໃຊ້ເຊິ່ງມີຫຼັກຖານຂອງການມີສ່ວນຮ່ວມຂອງປະຊາຊົນ.

- ການຫຼຸດລົງຂອງອັດຕາສ່ວນລັດຖະກອນຕໍ່ຈຳນວນພົນລະເມືອງໃນໄວເຮັດວຽກ ຈຳນວນ 10,000 ຄົນ.
- ຈຳນວນສູນບໍລິການປະຕູດຽວທີ່ຖືກສ້າງຕັ້ງຂຶ້ນ ແລະ ດຳເນີນງານ.
- ອັດຕາສ່ວນຂອງການບໍລິການສາທາລະນະທີ່ສາມາດເຂົ້າເຖິງໄດ້ຜ່ານລະບົບດີຈີຕອນ.
- ຈຳນວນບົດລາຍງານການກວດກາທີ່ສະພາແຫ່ງຊາດ/ສະພາປະຊາຊົນແຂວງ (PPA) ໄດ້ຍື່ນສະເໜີພ້ອມດ້ວຍຂໍ້ສະເໜີແນະທີ່ສາມາດປະຕິບັດໄດ້.
- ເປີເຊັນຂອງບັນຫາທີ່ພົນລະເມືອງຍົກຂຶ້ນມາຜ່ານສາຍດ່ວນ ແລະ ຄຳຮ້ອງຟ້ອງທີ່ໄດ້ຮັບການຕິດຕາມຈາກ PPA.
- ອັດຕາການສຳເລັດຄະດີ ແລະ ຕົວຊີ້ວັດກຳນົດເວລາຂອງການດຳເນີນຄະດີ (ສຳລັບຂະແໜງຍຸຕິທຳ).

UNDP ໄດ້ເນັ້ນໜັກເຖິງຄວາມສຳຄັນຂອງ **ຄວາມພ້ອມຂອງຂໍ້ມູນ ແລະ ຄວາມສາມາດຂອງອົງກອນ** ເພື່ອຕິດຕາມຕົວຊີ້ວັດເຫຼົ່ານີ້ໃນໄລຍະການຈັດຕັ້ງປະຕິບັດ NSEDP ຄັ້ງທີ 10 (2026–2030).